**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳແລະການຄ້າ

ເລກທີ.1953....../ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ.05 ທັນວາ.2017

# ຂໍ້ຕົກລົງ

# ວ່າດ້ວຍການຄ້າຊາຍແດນ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;
- ອີງຕາມ ໜັງສືສະເໜີ ຂອງກົມການນຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 4738/ກຂອ.ຊດ, ລົງວັນທີ 09 ພະຈິກ 2017.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄ້າຊາຍແດນ ເພື່ອຄຸ້ມຄອງການຄ້າຊາຍແດນ ໃຫ້ດຳເນີນໂດຍຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ແນໃສ່ສ້າງຄວາມສະດວກໃນການຊື້-ຂາຍ, ແລກປ່ຽນ ແລະ ນຳເຂົ້າ-ສົ່ງອອກສິນຄ້າ, ສົ່ງເສີມການຄ້າຊາຍແດນແບບມີແຜນການ ແລະ ມີຈຸດສຸມ ປະກອບສ່ວນສ້າງວຽກເຮັດງານທຳ, ສ້າງລາຍໄດ້ ແລະ ແກ້ໄຂຊີວິດການເປັນຢູ່ຂອງ ປະຊາຊົນໃຫ້ດີຂຶ້ນ.

**ມາດຕາ 2 ການຄ້າຊາຍແດນ**

ການຄ້າຊາຍແດນ ແມ່ນ ການພົວພັນຊື້-ຂາຍ, ແລກປ່ຽນ ແລະ ນຳເຂົ້າ-ສົ່ງອອກສິນຄ້າ ລະຫວ່າງ ສປປ ລາວ ກັບບັນດາປະເທດທີ່ມີຊາຍແດນຕິດຈອດກັນ ໂດຍຜ່ານດ່ານຊາຍແດນ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. **ບັນດາປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ** ໝາຍເຖິງ ຣາຊະອານາຈັກໄທ, ສາທາລະນະລັດສັງຄົມນິຍົມ ຫວຽດນາມ, ສາທາລະນະລັດ ປະຊາຊົນ ຈີນ, ຣາຊະອານາຈັກກຳປູເຈຍ ແລະ ສາທາລະນະລັດແຫ່ງ ສະຫະພາບມຽນມາ;
2. **ດ່ານຊາຍແດນ** ໝາຍເຖິງ ດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີຂອງ ສປປ ລາວທີ່ຖືກຮັບຮູ້ ແລະ ຍອມຮັບຮ່ວມກັນ ລະຫວ່າງ ສປປ ລາວ ແລະ ບັນດາປະເທດທີ່ມີຊາຍແດນຕິດຈອດກັນ;
3. **ຜູ້ດຳເນີນການຄ້າຊາຍແດນ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ ສປປ ລາວ ທີ່ພົວພັນຊື້-ຂາຍ, ແລກປ່ຽນ ແລະ ນຳເຂົ້າ-ສົ່ງອອກສິນຄ້າ ຜ່ານດ່ານຊາຍແດນ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

### ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວດຳເນີນການຄ້າຊາຍແດນຢູ່ ສປປ ລາວ.

## ໝວດທີ 2
## ຮູບແບບການຄ້າຊາຍແດນ

### ມາດຕາ 5 ຮູບແບບການຄ້າຊາຍແດນ

ຮູບແບບການຄ້າຊາຍແດນ ຂອງ ສປປ ລາວ ປະກອບມີ: ການຄ້າຊາຍແດນທົ່ວໄປ, ການຄ້າຊາຍແດນຕາມຂອບສັນຍາ ແລະ ການຄ້າຊາຍແດນຂອງປະຊາຊົນ.

### ມາດຕາ 6 ການຄ້າຊາຍແດນທົ່ວໄປ

ການຄ້າຊາຍແດນທົ່ວໄປແມ່ນການຄ້າ ລະຫວ່າງ ຜູ້ດຳເນີນທຸລະກິດຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ ກັບ ຜູ້ດຳເນີນທຸລະກິດຂອງບັນດາປະເທດທີ່ມີຊາຍແດນຕິດຈອດ ກັບ ສປປ ລາວ ເຊິ່ງມີການພົວພັນຊື້-ຂາຍ, ແລກປ່ຽນ ແລະ ນຳເຂົ້າ-ສົ່ງອອກສິນຄ້າ ໂດຍປະຕິບັດຕາມເງື່ອນໄຂ ແລະ ຂັ້ນຕອນການຄ້າຂອງສອງປະເທດ.

### ມາດຕາ 7 ການຄ້າຊາຍແດນຕາມຂອບສັນຍາ

ການຄ້າຊາຍແດນຕາມຂອບສັນຍາແມ່ນການຄ້າ ລະຫວ່າງ ສປປ ລາວ ກັບປະເທດທີ່ມີຊາຍແດນຕິດຈອດກັນ ທີ່ໄດ້ລົງນາມໃນສັນຍາ, ຂໍ້ຕົກລົງ ຫຼື ບົດບັນທຶກຮ່ວມກັນ ໃນການພົວພັນຊື້-ຂາຍ, ແລກປ່ຽນ ແລະ ນຳເຂົ້າ-ສົ່ງອອກສິນຄ້າ ຕາມເງື່ອນໄຂທີ່ໄດ້ກຳນົດໃນຂໍ້ຜູກພັນສອງຝ່າຍ.

### ມາດຕາ 8 ການຄ້າຊາຍແດນຂອງປະຊາຊົນ

ການຄ້າຊາຍແດນຂອງປະຊາຊົນແມ່ນການຊື້-ຂາຍ ຫຼື ແລກປ່ຽນສິນຄ້າຂອງປະຊາຊົນ ໂດຍຜ່ານດ່ານຊາຍແດນ ກັບປະເທດທີ່ມີຊາຍແດນຕິດຈອດ ເຊິ່ງສ່ວນໃຫຍ່ແມ່ນສິນຄ້າທີ່ຜະລິດໃນທ້ອງຖິ່ນຕາມເຂດຊາຍແດນ.

## ໝວດທີ 3
## ການດຳເນີນການຄ້າຊາຍແດນ

**ມາດຕາ 9 ການດຳເນີນການຄ້າຊາຍແດນທົ່ວໄປ**

ຜູ້ດຳເນີນການຄ້າຊາຍແດນທົ່ວໄປ ທີ່ພົວພັນຊື້-ຂາຍ, ແລກປ່ຽນ ແລະ ນຳເຂົ້າ-ສົ່ງອອກສິນຄ້າ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ຕິດພັນກັບການຄຸ້ມຄອງການຄ້າ ຂອງ ສປປ ລາວ ແລະ ປະເທດທີ່ມີຊາຍແດນຕິດຈອດກັນ.

**ມາດຕາ 10 ການດຳເນີນການຄ້າຊາຍແດນຕາມຂອບສັນຍາ**

ຜູ້ດຳເນີນການຄ້າຊາຍແດນຕາມຂອບສັນຍາທີ່ພົວພັນຊື້-ຂາຍ, ແລກປ່ຽນ ແລະ ນຳເຂົ້າ-ສົ່ງອອກສິນຄ້າ ຕ້ອງປະຕິບັດຕາມເງື່ອນໄຂ ແລະ ຂໍ້ຜູກພັນທີ່ກຳນົດໃນສັນຍາ, ຂໍ້ຕົກລົງ ຫຼື ບົດບັນທຶກ ທີ່ໄດ້ລົງນາມຮ່ວມກັນ ລະຫວ່າງ ສປປ ລາວ ກັບປະເທດທີ່ມີຊາຍແດນຕິດຈອດກັນ ໂດຍສອດຄ່ອງຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ແລະ ປະເທດທີ່ມີຊາຍແດນຕິດຈອດກັນສອງຝ່າຍ.

**ມາດຕາ 11 ການດຳເນີນການຄ້າຊາຍແດນຂອງປະຊາຊົນ**

ປະຊາຊົນທີ່ດຳເນີນການຄ້າຊາຍແດນ ໃນການພົວພັນຊື້-ຂາຍ ແລະ ແລກປ່ຽນສິນຄ້າ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ແລະ ປະເທດທີ່ມີຊາຍແດນຕິດຈອດກັນ ຫຼື ປະຕິບັດຕາມເງື່ອນໄຂ ແລະ ຂໍ້ຜູກພັນທີ່ກຳນົດໃນສັນຍາ, ຂໍ້ຕົກລົງ ຫຼື ບົດບັນທຶກ ທີ່ລັດຖະບານຂອງສອງປະເທດໄດ້ລົງນາມຮ່ວມກັນ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 12 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທົ່ວໄປ ມີພຶດຕິກຳດັ່ງນີ້:

1. ສວຍໃຊ້ອຳນາດ, ຕຳແໜ່ງ, ໜ້າທີ່ ເພື່ອຮຽກຮ້ອງຜົນປະໂຫຍດຈາກວຽກງານການຄ້າຊາຍແດນ;
2. ໃຫ້ການຊ່ວຍເຫລືອ, ປົກປ້ອງຜູ້ລະເມີດກົດໝາຍ ແລະ ລະບຽບການ;
3. ເປັນສື່ກາງ, ໃຫ້ສິນບົນ ແລະ ຮັບສິນບົນ ເພື່ອຜົນປະໂຫຍດໃນວຽກງານການຄ້າຊາຍແດນ;
4. ມີພຶດຕິກຳອື່ນ ທີ່ຜິດກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ແລະ ປະເທດທີ່ມີຊາຍແດນຕິດຈອດກັນ.

**ມາດຕາ 13 ຂໍ້ຫ້າມສຳລັບພະນັກງານ ຫຼື ເຈົ້າໜ້າທີ່**

ໃນການປະຕິບັດໜ້າທີ່ຫ້າມພະນັກງານ ຫຼື ເຈົ້າໜ້າທີ່ມີພຶດຕິກຳດັ່ງນີ້:

1. ປະຕິບັດໜ້າທີ່ໂດຍບໍ່ມີຄວາມເປັນທຳ, ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຮຽກຮ້ອງຜົນປະໂຫຍດສ່ວນຕົວ ຫຼື ກຸ່ມກ້ອນ;
2. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ, ເປີດເຜີຍຄວາມລັບ, ກົດໜ່ວງຖ່ວງດຶງ ແລະ ໃຫ້ຄວາມຮ່ວມມືແກ່ຜູ້ກະທຳຄວາມຜິດ ດ້ວຍການຮັບສິນບົນ ຫຼື ຜົນປະໂຫຍດອື່ນ;

3. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

**ມາດຕາ 14 ຂໍ້ຫ້າມສໍາລັບຜູ້ດໍາເນີນການຄ້າຊາຍແດນ**

ຫ້າມຜູ້ດໍາເນີນການຄ້າຊາຍແດນມີພຶດຕິກໍາ ດັ່ງນີ້:

1. ເຄື່ອນໄຫວພົວພັນຊື້-ຂາຍ, ແລກປ່ຽນ ແລະ ນໍາເຂົ້າ-ສົ່ງອອກສິນຄ້າ ທີ່ຜິດກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;
2. ສະໜອງຂໍ້ມູນ, ຂ່າວສານທີ່ບໍ່ຖືກຕ້ອງ, ປອມແປງເອກະສານ ຫຼື ນໍາໃຊ້ເອກະສານປອມ ກ່ຽວກັບການດໍາເນີນການຄ້າຊາຍແດນ, ເປັນສື່ກາງໃນການສໍ້ໂກງ ແລະ ໃຫ້ສິນບົນແກ່ເຈົ້າໜ້າທີ່;
3. ຫຼົບຫຼີກການປະຕິບັດພັນທະ, ເຊື່ອງອໍາລາຍການ ຫຼື ປົກປິດປະລິມານສິນຄ້າທີ່ຈະນໍາເຂົ້າ-ສົ່ງອອກ;
4. ມີພຶດຕິກໍາອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ຂອງ ສປປ ລາວແລະ ປະເທດທີ່ມີຊາຍແດນຕິດຈອດກັນ.

## ໝວດທີ 5
## ອົງການຄຸ້ມຄອງການຄ້າຊາຍແດນ

**ມາດຕາ 15 ອົງການຄຸ້ມຄອງການຄ້າຊາຍແດນ**

ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນເຈົ້າການໃນການຄຸ້ມຄອງວຽກງານການຄ້າຊາຍແດນ ໃນຂອບເຂດທົ່ວປະເທດ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ຕາມສິດ ແລະ ພາລະບົດບາດຂອງຕົນ.

ອົງການຄຸ້ມຄອງການຄ້າຊາຍແດນແບ່ງເປັນ 03 ຂັ້ນດັ່ງນີ້:

1. ຂັ້ນສູນກາງແມ່ນກົມການນໍາເຂົ້າ ແລະ ສົ່ງອອກ;
2. ຂັ້ນແຂວງແມ່ນພະແນກອຸດສາຫະກໍາ ແລະ ການຄ້າ ນະຄອນຫຼວງ, ແຂວງ;
3. ຂັ້ນເມືອງແມ່ນຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ.

**ມາດຕາ 16 ສິດ ແລະ ໜ້າທີ່ ຂອງ ກົມການນໍາເຂົ້າ ແລະ ສົ່ງອອກ**

ກົມການນໍາເຂົ້າ ແລະ ສົ່ງອອກ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ ລັດຖະມົນຕີ ໃນການຄຸ້ມຄອງ, ພົວພັນ, ຮ່ວມມື ແລະ ພັດທະນາວຽກງານການຄ້າຊາຍແດນ;
2. ຄົ້ນຄວ້າສ້າງນະໂຍບາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານການຄ້າຊາຍແດນ ເພື່ອນໍາສະເໜີຂັ້ນເທິງພິຈາລະນາແລະ ເປັນເຈົ້າການໃນການຈັດຕັ້ງຜັນຂະຫຍາຍ;
3. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກໍາ ທີ່ຕິດພັນກັບການຄ້າຊາຍແດນ ເພື່ອສະເໜີຂັ້ນເທິງພິຈາລະນາຮັບຮອງ;
4. ຝຶກອົບຮົມ, ເຜີຍແຜ່ບັນດານິຕິກໍາ ແລະ ຂໍ້ມູນຂ່າວສານທີ່ຕິດພັນກັບວຽກງານການຄ້າຊາຍແດນ;
5. ຕິດຕາມ, ກວດກາ, ປະເມີນຜົນ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານການຄ້າຊາຍແດນໃຫ້ສອດຄ່ອງກັບນະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກໍາທີ່ວາງອອກໃນແຕ່ລະໄລຍະ;
6. ເກັບກໍາ, ສັງລວມ ແລະ ວິເຄາະ ສະຖິຕິຂໍ້ມູນການຄ້າຊາຍແດນທົ່ວປະເທດ ລາຍງານໃຫ້ແກ່ລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ;

7. ເປັນຈຸດປະສານງານທັງພາຍໃນ ແລະ ຕ່າງປະເທດຕໍ່ວຽກງານການຄ້າຊາຍແດນ;
8. ຕາງໜ້າກະຊວງເຂົ້າຮ່ວມໃນຄະນະວິຊາການຕ່າງໆ ຕາມກົນໄກປະສານງານ ລະຫວ່າງ ກະຊວງກ່ຽວຂ້ອງຕໍ່ວຽກງານການຄ້າຊາຍແດນ;
9. ພົວພັນກັບພາກສ່ວນຕ່າງໆທັງພາຍໃນ ແລະ ຕ່າງປະເທດ ເພື່ອລະດົມຂົນຂວາຍເອົາການຮ່ວມມື, ຊ່ວຍເຫຼືອ ແລະ ສະໜັບສະໜູນເຂົ້າໃນວຽກງານການຄ້າຊາຍແດນ;
10. ຊຸກຍູ້ ແລະ ແນະນຳທາງດ້ານວິຊາການ ກ່ຽວກັບວຽກງານການຄ້າຊາຍແດນໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ, ແຂວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ.

**ມາດຕາ 17 ສິດ ແລະ ໜ້າທີ່ ຂອງ ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ, ແຂວງ**

ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ, ແຂວງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ເຜີຍແຜ່ນິຕິກຳ ແລະ ຂໍ້ມູນຂ່າວສານທີ່ຕິດພັນກັບວຽກງານການຄ້າຊາຍແດນ ໃຫ້ແກ່ພາກສ່ວນກ່ຽວຂ້ອງ ແລະ ສັງຄົມ ໄດ້ຮັບຊາບ ແລະ ປະຕິບັດໃຫ້ຖືກຕ້ອງ;
2. ຕິດຕາມ, ກວດກາ, ປະເມີນຜົນ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານການຄ້າຊາຍແດນໃຫ້ສອດຄ່ອງກັບນະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກຳທີ່ວາງອອກໃນແຕ່ລະໄລຍະ;
3. ເກັບກຳ, ສັງລວມ ແລະ ວິເຄາະ ສະຖິຕິຂໍ້ມູນການຄ້າຊາຍແດນລາຍງານໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ, ອົງການປົກຄອງນະຄອນຫຼວງ, ແຂວງ ຢ່າງເປັນປົກກະຕິ;
4. ເປັນຈຸດປະສານງານຂັ້ນນະຄອນຫຼວງ, ແຂວງ ໃນວຽກງານການຄ້າຊາຍແດນ;
5. ເຂົ້າຮ່ວມໃນຄະນະວິຊາການຕ່າງໆ ຕາມກົນໄກປະສານງານໃນວຽກງານການຄ້າຊາຍແດນ;
6. ພົວພັນຮ່ວມມື, ພົບປະແລກປ່ຽນຂໍ້ມູນຂ່າວສານ ແລະ ປະສານງານກັບພາກສ່ວນຕ່າງໆພາຍໃນແຂວງ ແລະ ບັນດາແຂວງຂອງປະເທດທີ່ມີຊາຍແດນຕິດຈອດກັນ ເພື່ອລະດົມຂົນຂວາຍເອົາການຮ່ວມມື, ການຊ່ວຍເຫຼືອ ແລະ ສະໜັບສະໜູນເຂົ້າໃນວຽກງານການຄ້າຊາຍແດນ;
7. ຊຸກຍູ້ ແລະ ແນະນຳທາງດ້ານວິຊາການ ກ່ຽວກັບວຽກງານການຄ້າຊາຍແດນໃຫ້ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ.

**ມາດຕາ 18 ສິດ ແລະ ໜ້າທີ່ ຂອງ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ**

ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ເຜີຍແຜ່ນິຕິກຳ ແລະ ຂໍ້ມູນຂ່າວສານທີ່ຕິດພັນກັບວຽກງານການຄ້າຊາຍແດນ ໃຫ້ແກ່ພາກສ່ວນກ່ຽວຂ້ອງ ແລະ ສັງຄົມ ໄດ້ຮັບຊາບ ແລະ ປະຕິບັດໃຫ້ຖືກຕ້ອງ;
2. ເປັນເຈົ້າການຈັດຕັ້ງປະຕິບັດວຽກງານການຄ້າຊາຍແດນໃຫ້ສອດຄ່ອງກັບນະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກຳທີ່ວາງອອກໃນແຕ່ລະໄລຍະ;
3. ປະສານສົມທົບກັບອຳນາດການປົກຄອງເມືອງ, ກຸ່ມບ້ານ, ບ້ານເພື່ອຕິດຕາມ, ເກັບກຳ ຂໍ້ມູນສະຖິຕິການຄ້າຊາຍແດນໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ, ແຂວງ ແລະ ອົງການປົກຄອງເມືອງ ຢ່າງເປັນປົກກະຕິ;
4. ເກັບກຳ, ສັງລວມສະຖິຕິຂໍ້ມູນການຄ້າຊາຍແດນລາຍງານໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ, ແຂວງ ແລະ ອົງການປົກຄອງເມືອງ ຢ່າງເປັນປົກກະຕິ;

5. ພົວພັນຮ່ວມມື, ພົບປະແລກປ່ຽນ ແລະ ປະສານງານກັບພາກສ່ວນຕ່າງໆພາຍໃນເມືອງ ແລະ ບັນດາເມືອງຂອງປະເທດທີ່ມີຊາຍແດນຕິດຈອດ ເພື່ອລະດົມຂົນຂວາຍເອົາການຮ່ວມມື, ການຊ່ວຍເຫຼືອ ແລະ ສະໜັບສະໜູນເຂົ້າໃນວຽກງານການຄ້າຊາຍແດນ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 19 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ, ຊົມເຊີຍ ຫຼື ປະຕິບັດນະໂຍບາຍຕາມຄວາມເໝາະສົມ.

**ມາດຕາ 20 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີໜັກ ຫຼື ເບົາ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 21 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມການນໍາເຂົ້າ ແລະ ສົ່ງອອກ, ພະແນກອຸດສາຫະກໍາ ແລະ ການຄ້າ ນະຄອນຫຼວງ, ແຂວງ, ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ເກີດປະສິດທິຜົນສູງສຸດ.

**ມາດຕາ 22 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ.

ລັດຖະມົນຕີ

ນ. ເຂັມມະນີ ພົນເສນາ